ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 164 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 16.12.09

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ**

**( ສະບັບປັບປຸງ )**

~~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 202/ສພຊ, ລົງວັນທີ 26 ພະຈິກ 2009 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍໄອຍະການປະຊາຊົນ (ສະບັບປັບປຸງ);
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 089/ຄປຈ, ລົງວັນທີ 10 ທັນວາ 2009.

***ປະທານປະເທດ***

***ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :***

*ມາດຕາ 1* : ປະກາດໃຊ້ກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ ( ສະບັບປັບປຸງ ).

*ມາດຕາ 2* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ.**

ຈູມມາລີ ໄຊຍະສອນ
~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ** ເລກທີ 202 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ
## ກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ ສະບັບປັບປຸງ

---

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ ສະບັບປັບປຸງ ໃນວາລະປະຊຸມຕອນບ່າຍຂອງວັນທີ 26 ພະຈິກ 2009,

## ກອງປະຊຸມໄດ້ຕົກລົງ:

ມາດຕາ 1. ຮັບຮອງເອົາກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫລາຍ.

ມາດຕາ 2. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 26 ພະຈິກ 2009

ປະທານສະພາແຫ່ງຊາດ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ | ເລກທີ 10 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 26 ພະຈິກ 2009

# ກົດໝາຍ
# ວ່າດ້ວຍ ອົງການໄອຍະການປະຊາຊົນ
# ( ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍ ວ່າດ້ວຍ ອົງການໄອຍະການປະຊາຊົນ ກຳນົດ ຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຕິດຕາມກວດກາ ຂອງອົງການໄອຍະການປະຊາຊົນ ເພື່ອຮັບປະກັນ ການປະຕິບັດໜ້າທີ່ວຽກງານໄອຍະການ ໃຫ້ມີປະສິດທິພາບສູງ, ປົກປ້ອງຜົນປະໂຫຍດຂອງລັດ, ສັງຄົມ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ແນໃສ່ ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ຄວາມເປັນ ລະບຽບຮຽບຮ້ອຍ, ເພີ່ມທະວີນິຕິທຳ, ສ້າງລັດແຫ່ງກົດໝາຍເທື່ອລະກ້າວ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 (ໃໝ່). ອົງການໄອຍະການປະຊາຊົນ**

ອົງການໄອຍະການປະຊາຊົນ ແມ່ນ ອົງການລັດ ທີ່ເຮັດໜ້າທີ່ ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ໃນຂອບເຂດທົ່ວປະເທດ ແລະ ສັ່ງຟ້ອງຜູ້ຖືກຫາ ຂຶ້ນສານຕາມກົດໝາຍ.

ມາດຕາ 3 (ໃໝ່). ການອະທິບາຍຄຳສັບ

**ຄຳສັບຕ່າງໆ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:**

1. **ພະນັກງານໄອຍະການປະຊາຊົນ ໝາຍເຖິງ** ພະນັກງານ ທີ່ໄດ້ຮັບການແຕ່ງຕັ້ງ ແລະ ມອບໝາຍ ຈາກຫົວໜ້າອົງການໄອຍະການປະຊາຊົນ ໃຫ້ປະຕິບັດວຽກງານ ຕິດຕາມ ກວດກາ, ສອບສວນ ແລະ ເຂົ້າຮ່ວມປະຊຸມສານ;
2. **ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ ໝາຍເຖິງ** ພະນັກງານ ທີ່ໄດ້ຮັບການແຕ່ງຕັ້ງ ແລະ ມອບໝາຍ ໃຫ້ປະຕິບັດວຽກງານ ຊ່ວຍພະນັກງານໄອຍະການປະຊາຊົນ;
3. **ນິຕິທຳ ໝາຍເຖິງ** ການເຄົາລົບ ແລະ ປະຕິບັດກົດໝາຍ ຢ່າງຖືກຕ້ອງ ແລະ ເຂັ້ມງວດ;
4. **ຜູ້ຖືກຫາ ໝາຍເຖິງ** ບຸກຄົນ ທີ່ຖືກນຳມາດຳເນີນຄະດີ ໂດຍຄຳສັ່ງເປີດການສືບສວນ-ສອບສວນ ຂອງຫົວໜ້າ ອົງການສືບສວນ-ສອບສວນ ຫລື ອົງການໄອຍະການປະຊາຊົນ;
5. **ຈຳເລີຍ ໝາຍເຖິງ** ຜູ້ຖືກຫາທີ່ຖືກສັ່ງຟ້ອງ ຂຶ້ນສານປະຊາຊົນແລ້ວ;
6. **ກ່າວຟ້ອງ ໝາຍເຖິງ** ການຖະແຫລງ ຂອງຫົວໜ້າ, ຮອງຫົວໜ້າອົງການໄອຍະການ ຫລື ພະນັກງານໄອຍະການປະຊາຊົນ ໃນນາມຫົວໜ້າອົງການໄອຍະການປະຊາຊົນ ເພື່ອຈຳແນກການກະທຳຜິດ ຂອງຈຳເລີຍ ຕໍ່ຄະນະສານ ຢູ່ທີ່ປະຊຸມສານ;
7. **ນັກໂທດ ໝາຍເຖິງ** ຈຳເລີຍ ທີ່ຖືກສານຕັດສິນລົງໂທດ ແລະ ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;
8. **ສະຖານທີ່ກັກຕົວ ໝາຍເຖິງ** ບ່ອນຄວບຄຸມຕົວ ຜູ້ຖືກສົງໄສ ພາຍໃນກຳນົດເວລາທີ່ກົດໝາຍໄດ້ບົ່ງໄວ້;
9. **ສະຖານທີ່ກັກຂັງ ໝາຍເຖິງ** ບ່ອນຄຸມຂັງ ຜູ້ຖືກຫາ ໃນໄລຍະດຳເນີນຄະດີ ກ່ອນຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ;
10. **ຄ້າຍດັດສ້າງ ໝາຍເຖິງ** ສະຖານທີ່ປະຕິບັດໂທດ ຂອງນັກໂທດ ຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ;
11. **ສູນດັດສ້າງ ໝາຍເຖິງ** ສະຖານທີ່ສຶກສາອົບຮົມ, ດັດສ້າງທາງດ້ານບໍລິຫານ ຕໍ່ຜູ້ກະທຳຜິດທາງອາຍາ ໃນສະຖານເບົາບາງ.

ມາດຕາ 4 (ໃໝ່). ນະໂຍບາຍກ່ຽວກັບວຽກງານ ຂອງອົງການໄອຍະການປະຊາຊົນ

ລັດ ສົ່ງເສີມ ແລະ ສ້າງເງື່ອນໄຂສະດວກ ໃນດ້ານຕ່າງໆ ໃຫ້ແກ່ການເຄື່ອນໄຫວປະຕິບັດໜ້າທີ່ຂອງອົງການໄອຍະການປະຊາຊົນ ດ້ວຍການວາງນະໂຍບາຍ, ລະບຽບກົດໝາຍ, ບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ ແນໃສ່ເຮັດໃຫ້ການຕິດຕາມກວດກາການປະຕິບັດກົດໝາຍ ມີປະສິດທິຜົນ, ໂປ່ງໃສ ແລະຍຸຕິທຳ, ປະກອບສ່ວນເຂົ້າໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ

ໃຫ້ມີຄວາມເຂັ້ມແຂງ, ທັງຮັບປະກັນຜົນປະໂຫຍດຂອງລັດ, ສັງຄົມ, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງພົນລະເມືອງ.

ລັດ ສົ່ງເສີມ ແລະ ຊຸກຍູ້ການໂຄສະນາ, ສຶກສາອົບຮົມກົດໝາຍ ໃຫ້ປະຊາຊົນຮັບຮູ້, ເຂົ້າໃຈ ແລະ ປະຕິບັດໃຫ້ຖືກຕ້ອງ, ເຂັ້ມງວດ ເພື່ອສ້າງປັດໄຈ ໃນການສ້າງລັດແຫ່ງກົດໝາຍ ເທື່ອລະກ້າວ.

## ມາດຕາ 5 (ໃໝ່). ຫລັກການ ກ່ຽວກັບວຽກງານຂອງອົງການໄອຍະການປະຊາຊົນ

ອົງການໄອຍະການປະຊາຊົນ ເຄື່ອນໄຫວວຽກງານຂອງຕົນ ບົນພື້ນຖານຫລັກການ ດັ່ງນີ້:

1. ຮັບປະກັນຄວາມສັກສິດຂອງກົດໝາຍ;
2. ຮັບປະກັນ ການຕິດຕາມກວດກາການປະຕິບັດກົດໝາຍ ຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ;
3. ຮັບປະກັນຄວາມຊັດເຈນ, ຍຸຕິທຳ, ທັນເວລາ ແລະ ເປີດເຜີຍຕາມລະບຽບການ;
4. ຮັບປະກັນ ລະບອບລວມສູນເປັນເອກະພາບຕາມສາຍຕັ້ງ ແລະ ລະບອບຫົວໜ້າ;
5. ຮັບປະກັນໃຫ້ຜູ້ກະທຳຜິດ ໄດ້ຮັບການລົງໂທດຕາມກົດໝາຍ ແລະ ບໍ່ໃຫ້ຜູ້ບໍ່ໄດ້ກະທຳຜິດຖືກລົງໂທດ;
6. ຮັບປະກັນ ການປະສານສົມທົບກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງໃນການປະຕິບັດວຽກງານ.

## ມາດຕາ 6. ການພິຈາລະນາ ຄຳຮ້ອງຟ້ອງ ແລະ ຄຳສະເໜີ

ຫົວໜ້າອົງການໄອຍະການປະຊາຊົນທຸກຂັ້ນ ພິຈາລະນາ ຄຳຮ້ອງຟ້ອງ ແລະ ຄຳສະເໜີ ຂອງອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ ແລະ ພົນລະເມືອງ ຕາມກຳນົດເວລາທີ່ກົດໝາຍໄດ້ບົ່ງໄວ້, ວາງມາດຕະການທີ່ຈຳເປັນ ເພື່ອຟື້ນຟູສິດທີ່ໄດ້ຖືກລະເມີດ, ປົກປັກຮັກສາສິດ ແລະ ຜົນປະໂຫຍດ ຂອງການຈັດຕັ້ງດັ່ງກ່າວ, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງພົນລະເມືອງ.

## ມາດຕາ 7 (ໃໝ່). ການປົກປ້ອງ

ຫົວໜ້າ, ຮອງຫົວໜ້າອົງການໄອຍະການ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ ລວມທັງຜູ້ເຂົ້າຮ່ວມ ໃນວຽກງານຕິດຕາມກວດກາ ເຊັ່ນ ຜູ້ລາຍງານ, ຜູ້ໃຫ້ຂໍ້ມູນຂ່າວສານ, ພະຍານ, ຜູ້ຊ່ຽວຊານ ຕ້ອງໄດ້ຮັບການປົກປ້ອງຕາມລະບຽບກົດໝາຍ ຈາກການບັງຄັບ, ນາບຂູ່ ແລະ ການກະທຳທີ່ເປັນອັນຕະລາຍຕໍ່ຊີວິດ, ສຸຂະພາບ ຫລື ຊັບສິນ.

## ມາດຕາ 8 (ໃໝ່). ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຂອງອົງການໄອຍະການປະຊາຊົນ ເປັນຕົ້ນການຮ່ວມມືທາງດ້ານກົດໝາຍ ແລະ ຍຸຕິທຳ ດ້ວຍການ ແລກປ່ຽນບົດຮຽນ, ຂໍ້

ມູນຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ ຫຼື ສຳມະນາ, ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ ເພື່ອພັດທະນາວຽກງານ ຂອງອົງການໄອຍະການປະຊາຊົນ ໃຫ້ມີຄຸນນະພາບ, ເຂັ້ມແຂງ ແລະ ທັນສະໄໝ ລວມທັງການປະຕິບັດ ສົນທິສັນຍາ ແລະ ສັນຍາ ທີ່ ສປປ ລາວ ເປັນພາຄີ.

# ພາກທີ II

# ອົງການໄອຍະການປະຊາຊົນ

## ໝວດທີ 1

## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່

### ມາດຕາ 9. ທີ່ຕັ້ງ ແລະ ພາລະບົດບາດ ຂອງອົງການໄອຍະການປະຊາຊົນ

ອົງການໄອຍະການປະຊາຊົນ ແມ່ນ ອົງການຕິດຕາມກວດກາຂອງລັດ, ມີພາລະບົດບາດ ຕິດຕາມ ແລະ ກວດກາ ການເຄົາລົບ ແລະ ປະຕິບັດກົດໝາຍ ຂອງບັນດາກະຊວງ, ອົງການ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ, ພົນລະເມືອງ ເພື່ອໃຫ້ມີຄວາມຖືກຕ້ອງ ແລະ ເປັນເອກະພາບ ແລະ ສັ່ງຟ້ອງຜູ້ຖືກຫາ ຂຶ້ນສານຕາມກົດໝາຍ.

### ມາດຕາ 10. ສິດ ແລະ ໜ້າທີ່ລວມ ຂອງອົງການໄອຍະການປະຊາຊົນ

ອົງການໄອຍະການປະຊາຊົນ ມີສິດ ແລະ ໜ້າທີ່ລວມ ດັ່ງນີ້:

1. ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ຂອງບັນດາກະຊວງ, ອົງການ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ ແລະ ພົນລະເມືອງ. ການຕິດຕາມກວດການີ້ ເອີ້ນວ່າ ການຕິດຕາມກວດກາທົ່ວໄປ;
2. ຕິດຕາມກວດກາການປະຕິບັດກົດໝາຍ ຂອງ ອົງການສືບສວນ - ສອບສວນ;
3. ດຳເນີນການສືບສວນ - ສອບສວນ ຄະດີໃດໜຶ່ງ ເປັນບາງສ່ວນ ຫລື ທັງໝົດ ຕາມທີ່ກົດໝາຍໄດ້ກຳນົດໄວ້;
4. ສັ່ງຟ້ອງຜູ້ຖືກຫາ ຂຶ້ນສານ;
5. ຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີຢູ່ສານ;
6. ຕິດຕາມກວດກາການປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;
7. ຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນ ຂອງສານ;

8. ຕິດຕາມກວດກາການຄົ້ນຄວ້າ, ການສະເໜີ ແລະ ການຈັດຕັ້ງປະຕິບັດ ການໃຫ້ອະໄພຍະໂທດ ຕາມລັດຖະດຳລັດ ຂອງປະທານປະເທດ;
9. ປະສານສົມທົບ ກັບອົງການສືບສວນ-ສອບສວນ ແລະ ອົງການອື່ນທີ່ກ່ຽວຂ້ອງ ດຳເນີນການ ສະກັດກັ້ນ, ຕ້ານອາດຊະຍາກຳ ຫລື ການກະທຳຜິດ ແລະ ການລະເມີດກົດໝາຍອື່ນ ພ້ອມທັງ ລົບລ້າງບັນດາສາເຫດ ແລະ ເງື່ອນໄຂ ທີ່ພາໃຫ້ການກະທຳຜິດເກີດຂຶ້ນ;
10. ຮື້ຟື້ນຄະດີ ຕາມກົດໝາຍ ໃນກໍລະນີທີ່ມີຫລັກຖານໃໝ່;
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກົດໝາຍໄດ້ກຳນົດໄວ້.

## ໝວດທີ 2
## ລະບົບການຈັດຕັ້ງ ອົງການໄອຍະການປະຊາຊົນ

### ມາດຕາ 11. ລະບົບການຈັດຕັ້ງ ອົງການໄອຍະການປະຊາຊົນ

ລະບົບການຈັດຕັ້ງ ອົງການໄອຍະການປະຊາຊົນ ປະກອບດ້ວຍ:

1. ອົງການໄອຍະການປະຊາຊົນສູງສຸດ;
2. ອົງການໄອຍະການປະຊາຊົນພາກ;
3. ອົງການໄອຍະການປະຊາຊົນແຂວງ, ນະຄອນ;
4. ອົງການໄອຍະການປະຊາຊົນເຂດ;
5. ອົງການໄອຍະການທະຫານ.

### ມາດຕາ12. ອົງການໄອຍະການປະຊາຊົນສູງສຸດ

ອົງການໄອຍະການປະຊາຊົນສູງສຸດ ແມ່ນ ອົງການຕິດຕາມກວດກາສູງສຸດ ຂອງລະບົບອົງການໄອຍະການປະຊາຊົນ, ມີພາລະບົດບາດ ຊີ້ນຳ, ນຳພາ ອົງການໄອຍະການປະຊາຊົນຂັ້ນລຸ່ມ ແລະ ອົງການໄອຍະການທະຫານ ໃນການຕິດຕາມກວດກາການປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ໃນທົ່ວປະເທດ.

### ມາດຕາ 13. ສິດ ແລະ ໜ້າທີ່ ຂອງ ອົງການໄອຍະການປະຊາຊົນສູງສຸດ

ອົງການໄອຍະການປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມກວດກາການປະຕິບັດກົດໝາຍ ໃນຂອບເຂດທົ່ວປະເທດ;
2. ຕິດຕາມກວດກາການປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນຂັ້ນລຸ່ມ ແລະ ອົງການໄອຍະການທະຫານ;
3. ແນະນຳ, ອະທິບາຍ ເນື້ອໃນຂອງກົດໝາຍ ໃນຂົງເຂດທີ່ຕົນຮັບຜິດຊອບ ແລະ ສະໜອງຂໍ້ມູນຂ່າວສານທາງດ້ານກົດໝາຍ ໃຫ້ອົງການໄອຍະການປະຊາຊົນຂັ້ນລຸ່ມ ແລະ ອົງການໄອຍະການທະຫານ;

4. ອຳນວຍຄວບຄຸມ, ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການໄອຍະການປະຊາຊົນ ຂັ້ນຂອງຕົນ ແລະ ຂັ້ນລຸ່ມ;
5. ສ້າງແຜນບຳລຸງ ແລະ ຍົກລະດັບພະນັກງານ ປະຈຳອົງການໄອຍະການປະຊາຊົນ;
6. ຄົ້ນຄວ້າ ແລະ ສັງລວມ ກ່ຽວກັບການເຄື່ອນໄຫວວຽກງານ ຂອງ ອົງການໄອຍະການປະຊາຊົນ, ວຽກງານສະຖິຕິຄະດີ, ຜູ້ຖືກຫາ ແລະ ນັກໂທດ ໃນທົ່ວປະເທດ;
7. ປະສານສົມທົບ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດໜ້າທີ່ວຽກງານຂອງຕົນ;
8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານກົດໝາຍ ແລະ ຍຸຕິທຳ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກົດໝາຍໄດ້ກຳນົດໄວ້.

### ມາດຕາ 14. ອົງການໄອຍະການປະຊາຊົນພາກ

ອົງການໄອຍະການປະຊາຊົນພາກ ແມ່ນ ອົງການໜຶ່ງໃນລະບົບອົງການໄອຍະການປະຊາຊົນ, ມີພາລະບົດບາດ ຕິດຕາມກວດກາການປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ໃນຂອບເຂດພາກ ທີ່ຕົນຮັບຜິດຊອບ.

ອົງການໄອຍະການປະຊາຊົນພາກ ສ້າງຕັ້ງຂຶ້ນຢູ່ພາກເໜືອ, ພາກກາງ ແລະພາກໃຕ້ ຂອງ ສປປ ລາວ.

ອົງການໄອຍະການປະຊາຊົນແຂວງ, ນະຄອນ ທີ່ຂຶ້ນກັບ ອົງການໄອຍະການປະຊາຊົນພາກ ແລະ ທີ່ຕັ້ງຂອງອົງການໄອຍະການປະຊາຊົນພາກ ໃນແຕ່ລະພາກນັ້ນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 15. ສິດ ແລະ ໜ້າທີ່ ຂອງ ອົງການໄອຍະການປະຊາຊົນພາກ

ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ອົງການໄອຍະການປະຊາຊົນພາກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມກວດກາການປະຕິບັດກົດໝາຍ ໃນຂອບເຂດພາກ;
2. ຕິດຕາມກວດກາການປະຕິບັດໜ້າທີ່ ຂອງ ອົງການໄອຍະການປະຊາຊົນແຂວງ, ນະຄອນ ;
3. ແນະນຳ ແລະ ສະໜອງຂໍ້ມູນຂ່າວສານທາງດ້ານກົດໝາຍ ໃຫ້ແກ່ອົງການໄອຍະການປະຊາຊົນແຂວງ, ນະຄອນ;
4. ອຳນວຍຄວບຄຸມ, ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການໄອຍະການປະຊາຊົນຂັ້ນຂອງຕົນ ແລະ ອົງການໄອຍະການປະຊາຊົນແຂວງ, ນະຄອນ;
5. ຄົ້ນຄວ້າ ແລະ ສັງລວມ ການລາຍງານ ກ່ຽວກັບການປະຕິບັດວຽກງານຂອງອົງການໄອຍະການປະຊາຊົນແຂວງ, ນະຄອນ, ວຽກງານສະຖິຕິຄະດີ, ຜູ້ຖືກຫາ ແລະ ນັກໂທດ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກົດໝາຍໄດ້ກຳນົດໄວ້.

### ມາດຕາ 16. ອົງການໄອຍະການປະຊາຊົນແຂວງ, ນະຄອນ

ອົງການໄອຍະການປະຊາຊົນແຂວງ, ນະຄອນ ແມ່ນ ອົງການໜຶ່ງໃນລະບົບອົງການໄອຍະການປະຊາຊົນ, ມີພາລະບົດບາດ ຕິດຕາມກວດກາການປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ຢູ່ໃນຂອບເຂດແຂວງ, ນະຄອນ ແລະ ສັ່ງຟ້ອງຜູ້ຖືກຫາ ຂຶ້ນສານ.

### ມາດຕາ 17. ສິດ ແລະ ໜ້າທີ່ ຂອງ ອົງການໄອຍະການປະຊາຊົນແຂວງ, ນະຄອນ

ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ອົງການໄອຍະການປະຊາຊົນແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມກວດກາການປະຕິບັດກົດໝາຍ ໃນຂອບເຂດແຂວງ, ນະຄອນ;
2. ຕິດຕາມກວດກາການປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນເຂດ;
3. ແນະນຳ ແລະ ສະໜອງຂໍ້ມູນຂ່າວສານທາງດ້ານກົດໝາຍ ໃຫ້ແກ່ອົງການໄອຍະການປະຊາຊົນເຂດ;
4. ອຳນວຍຄວບຄຸມ, ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການໄອຍະການປະຊາຊົນຂັ້ນຂອງຕົນ ແລະ ອົງການໄອຍະການປະຊາຊົນເຂດ;
5. ຄົ້ນຄວ້າ ແລະ ສັງລວມ ການລາຍງານ ກ່ຽວກັບການປະຕິບັດວຽກງານຂອງອົງການໄອຍະການປະຊາຊົນເຂດ, ວຽກງານສະຖິຕິຄະດີ, ຜູ້ຖືກຫາ ແລະ ນັກໂທດ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກົດໝາຍໄດ້ກຳນົດໄວ້.

### ມາດຕາ 18 (ໃໝ່). ອົງການໄອຍະການປະຊາຊົນເຂດ

ອົງການໄອຍະການປະຊາຊົນເຂດ ແມ່ນ ອົງການໜຶ່ງໃນລະບົບອົງການໄອຍະການປະຊາຊົນ, ມີພະລະບົດບາດ ຕິດຕາມກວດກາການປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ຢູ່ໃນຂອບເຂດເມືອງ ທີ່ຂຶ້ນກັບເຂດຂອງຕົນ ແລະ ສັ່ງຟ້ອງຜູ້ຖືກຫາ ຂຶ້ນສານ.

ອົງການໄອຍະການປະຊາຊົນເຂດ ສ້າງຕັ້ງຂຶ້ນ ໂດຍເອົາເມືອງໃດໜຶ່ງ ຫລື ຫລາຍເມືອງ ມາໂຮມເຂົ້າກັນເປັນເຂດໜຶ່ງ ຕາມສະພາບພູມສາດ, ການຂະຫຍາຍຕົວທາງດ້ານເສດຖະກິດ - ສັງຄົມ ຫລື ມີຄະດີເກີດຂຶ້ນຫລາຍ.

ສຳລັບເມືອງທີ່ຢູ່ພາຍໃນເຂດ ຊຶ່ງບໍ່ມີອົງການໄອຍະການປະຊາຊົນເຂດຕັ້ງຢູ່ນັ້ນ ໃຫ້ມີພະນັກງານໄອຍະການປະຊາຊົນ ໜຶ່ງ ຫາ ສອງຄົນ ປະຈຳຢູ່ ເພື່ອປະຕິບັດສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນເຂດ ຕາມທີ່ກົດໝາຍໄດ້ກຳນົດໄວ້.

ໃນກໍລະນີທີ່ ອົງການໄອຍະການປະຊາຊົນເຂດໃດໜຶ່ງ ຫາກບໍ່ທັນສາມາດເຄື່ອນໄຫວໄດ້ ຕາມພາລະບົດບາດນັ້ນ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ມີສິດຕົກລົງ ມອບສິດ ແລະ ໜ້າທີ່ ໃຫ້ອົງການໄອຍະການປະຊາຊົນເຂດ ທີ່ຢູ່ໃກ້ຄຽງ ຮັບຜິດຊອບວຽກງານ ແທນຊົ່ວຄາວ.

**ມາດຕາ 19 (ໃໝ່). ສິດ ແລະ ໜ້າທີ່ ຂອງ ອົງການໄອຍະການປະຊາຊົນເຂດ**

ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ອົງການໄອຍະການປະຊາຊົນເຂດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມກວດກາການປະຕິບັດກົດໝາຍ ໃນຂອບເຂດເມືອງ ທີ່ຂຶ້ນກັບຕົນ;
2. ອຳນວຍຄວບຄຸມ, ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວ;
3. ຄົ້ນຄວ້າ ແລະ ສັງລວມ ການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ເກັບກຳສະຖິຕິຄະດີ, ຜູ້ຖືກຫາ ແລະ ນັກໂທດ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 20 (ໃໝ່). ອົງການໄອຍະການທະຫານ**

ອົງການໄອຍະການທະຫານ ແມ່ນ ອົງການໜຶ່ງໃນລະບົບອົງການໄອຍະການປະຊາຊົນ, ມີພາລະບົດບາດ ໃນການຕິດຕາມກວດກາການປະຕິບັດກົດໝາຍ ໃນຂົງເຂດວຽກງານການທະຫານ, ໃນຂອບເຂດຕັ້ງທັບຂອງທະຫານ ແລະ ສັ່ງຟ້ອງຜູ້ຖືກຫາ ຂຶ້ນສານທະຫານ.

**ມາດຕາ 21 (ໃໝ່). ລະບົບ ອົງການໄອຍະການທະຫານ**

ອົງການໄອຍະການທະຫານ ປະກອບດ້ວຍ:

1. ອົງການໄອຍະການທະຫານຂັ້ນສູງ;
2. ອົງການໄອຍະການທະຫານພາກ;
3. ອົງການໄອຍະການທະຫານກອງພົນ;
4. ອົງການໄອຍະການທະຫານກອງພັນໃຫຍ່ເອກະລາດ;
5. ອົງການໄອຍະການທະຫານແຂວງ, ນະຄອນ.

ໂຄງປະກອບ ການຈັດຕັ້ງ, ບຸກຄະລາກອນ, ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານ ໄດ້ກຳນົດໄວ້ໃນນິຕິກຳສະເພາະ.

## ໝວດທີ 3
## ໂຄງປະກອບ ການຈັດຕັ້ງ ແລະ ບຸກຄະລາກອນ

**ມາດຕາ 22 (ໃໝ່). ໂຄງປະກອບການຈັດຕັ້ງ**

ເພື່ອຮັບປະກັນການປະຕິບັດໜ້າທີ່ ແລະ ການເຄື່ອນໄຫວວຽກງານຂອງຕົນ ອົງການໄອຍະ ການປະຊາຊົນ ມີ ໂຄງປະກອບ ດັ່ງນີ້:

1. ອົງການໄອຍະການປະຊາຊົນສູງສຸດ ມີ ຄະນະກຳມະການໄອຍະການປະຊາຊົນ, ຫ້ອງການ, ບັນດາກົມ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ, ພະແນກ ແລະ ຂະແໜງ;
2. ອົງການໄອຍະການປະຊາຊົນພາກ ມີ ຫ້ອງການ, ພະແນກ ແລະ ຂະແໜງ;
3. ອົງການໄອຍະການປະຊາຊົນແຂວງ, ນະຄອນ ມີ ຫ້ອງການ, ຂະແໜງ ແລະ ໜ່ວຍງານ;
4. ອົງການໄອຍະການປະຊາຊົນເຂດ ມີ ຫ້ອງການ ແລະ ໜ່ວຍງານ.

ການເຄື່ອນໄຫວ ຂອງອົງການໄອຍະການປະຊາຊົນດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ມາດຕາ 23 (ໃໝ່). ຄະນະກຳມະການໄອຍະການປະຊາຊົນ

ຄະນະກຳມະການໄອຍະການປະຊາຊົນ ແມ່ນ ການຈັດຕັ້ງຂອງອົງການໄອຍະການປະຊາຊົນສູງສຸດ, ມີພາລະບົດບາດ ຕົກລົງບັນຫາທີ່ມີຄວາມສຳຄັນ ແລະ ມີລັກສະນະຍຸດທະສາດ ກ່ຽວກັບວຽກງານຂອງອົງການໄອຍະການປະຊາຊົນ ເພື່ອຮັບປະກັນເຮັດໃຫ້ລະບົບອົງການໄອຍະການປະຊາຊົນ ເຄື່ອນໄຫວຢ່າງມີປະສິດທິພາບ.

ຄະນະກຳມະການໄອຍະການປະຊາຊົນ ປະກອບດ້ວຍ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນປະທານ, ບັນດາຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນຮອງປະທານ, ຫົວໜ້າຫ້ອງການ, ບັນດາຫົວໜ້າກົມ ແລະ ພະນັກງານໄອຍະການປະຊາຊົນ ຈຳນວນໜຶ່ງ ຂອງອົງການໄອຍະການປະຊາຊົນສູງສຸດ ເປັນກຳມະການ ໂດຍແມ່ນ ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ແຕ່ງຕັ້ງ ຕາມການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ຈຳນວນສະມາຊິກ ຂອງຄະນະກຳມະການໄອຍະການປະຊາຊົນ ບໍ່ໃຫ້ເກີນສິບຫ້າຄົນ.

ຄະນະກຳມະການໄອຍະການປະຊາຊົນ ເຄື່ອນໄຫວວຽກງານຂອງຕົນ ດ້ວຍການເປີດກອງປະຊຸມຢ່າງໜ້ອຍສາມເດືອນຕໍ່ເທື່ອ ຕາມການຮຽກໂຮມ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ມະຕິກອງປະຊຸມ ຂອງຄະນະກຳມະການໄອຍະການປະຊາຊົນ ຖືເອົາຕາມສຽງສ່ວນຫລາຍ. ໃນກໍລະນີທີ່ມີຄະແນນສຽງເທົ່າກັນ ໃຫ້ປະຕິບັດຕາມຄຳເຫັນ ຝ່າຍທີ່ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເຫັນດີນຳ.

## ມາດຕາ 24 (ໃໝ່). ໂຄງປະກອບບຸກຄະລາກອນ ຂອງ ອົງການໄອຍະການປະຊາຊົນ

ອົງການໄອຍະການປະຊາຊົນ ປະກອບດ້ວຍ ບຸກຄະລາກອນ ດັ່ງນີ້:

1. ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ບັນດາຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໃນນີ້ໜຶ່ງທ່ານ ເປັນ ຫົວໜ້າອົງການໄອຍະການທະຫານຂັ້ນສູງ;
2. ຫົວໜ້າອົງການໄອຍະການປະຊາຊົນພາກ, ບັນດາຮອງຫົວໜ້າອົງການໄອຍະການປະຊາຊົນພາກ;

3. ຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນ, ບັນດາຮອງຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນ;
4. ຫົວໜ້າອົງການໄອຍະການປະຊາຊົນເຂດ, ບັນດາຮອງຫົວໜ້າອົງການໄອຍະການປະຊາຊົນເຂດ.

ນອກຈາກນີ້ ອົງການໄອຍະການປະຊາຊົນແຕ່ລະຂັ້ນ ຍັງມີບັນດາພະນັກງານໄອຍະການປະຊາຊົນ, ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ ແລະ ພະນັກງານບໍລິຫານ.

## ມາດຕາ 25. ມາດຕະຖານ ຂອງ ຫົວໜ້າອົງການໄອຍະການປະຊາຊົນ ແລະ ພະນັກງານໄອຍະການປະຊາຊົນ

ຫົວໜ້າອົງການໄອຍະການປະຊາຊົນ ແລະ ພະນັກງານໄອຍະການປະຊາຊົນ ຕ້ອງມີມາດຕະຖານລວມດັ່ງນີ້:

1. ເປັນພົນລະເມືອງລາວ ໂດຍກໍາເນີດ ທີ່ມີອາຍຸແຕ່ ຊາວຫ້າປີ ຂຶ້ນໄປ;
2. ເປັນຜູ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສົມທໍາປະຕິວັດ, ມີຈັນຍາທໍາດີ, ມີຄວາມສັດຊື່ບໍລິສຸດ ຕໍ່ ການປະຕິບັດໜ້າທີ່ຂອງຕົນ;
3. ເປັນຜູ້ມີລະດັບການສຶກສາດ້ານກົດໝາຍ ແຕ່ ຂັ້ນສູງຂຶ້ນໄປ ສໍາລັບ ຫົວໜ້າໜ້າອົງການໄອຍະການປະຊາຊົນ, ແຕ່ຂັ້ນກາງຂຶ້ນໄປ ສໍາລັບພະນັກງານໄອຍະການປະຊາຊົນ, ໄດ້ຜ່ານການຝຶກອົບຮົມຫລັກສູດວຽກງານໄອຍະການ;
4. ບໍ່ເຄີຍຖືກລົງໂທດທາງອາຍາ ໃນການກະທໍາຜິດ ໂດຍເຈດຕະນາ;
5. ເປັນຜູ້ມີສຸຂະພາບດີ.

ຫົວໜ້າອົງການໄອຍະການປະຊາຊົນ ແລະ ພະນັກງານໄອຍະການປະຊາຊົນ ມີ ມາດຕະຖານ, ຊັ້ນ ແລະ ຂັ້ນຂອງຕົນ ຊຶ່ງໄດ້ກໍານົດໄວ້ໃນລະບຽບການສະເພາະ.

## ມາດຕາ 26 (ໃໝ່). ການເລືອກຕັ້ງ, ແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕໍາແໜ່ງ

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຖືກເລືອກຕັ້ງ ຫລື ປົດຕໍາແໜ່ງ ໂດຍສະພາແຫ່ງຊາດ ຕາມການສະເໜີ ຂອງປະທານປະເທດ, ມີອາຍຸການເທົ່າກັບ ອາຍຸການຂອງສະພາແຫ່ງຊາດ.

ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕໍາແໜ່ງ ໂດຍປະທານປະເທດ ຕາມການສະເໜີ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ຫົວໜ້າ, ຮອງຫົວໜ້າອົງການໄອຍະການປະຊາຊົນ ພາກ, ແຂວງ, ນະຄອນ, ເຂດ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ ແລະ ພະນັກງານບໍລິຫານ ຂອງອົງການໄອຍະການປະຊາຊົນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕໍາແໜ່ງ ໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ສຳລັບ ການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ ພະນັກງານ ຕາມທີ່ໄດ້ບົ່ງໄວ້ ໃນມາດຕາ 29 ຂໍ້ 4 ຂອງ ກົດໝາຍສະບັບນີ້ ຕ້ອງໄດ້ຮັບຄຳເຫັນດີຈາກຄະນະກຳມະການໄອຍະການປະຊາຊົນ.

**ມາດຕາ 27. ສິດ ແລະ ໜ້າທີ່ ຂອງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ**

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ ແລະ ນຳພາ ການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ໃນຂອບເຂດທົ່ວປະເທດ;
2. ຊີ້ນຳ, ນຳພາ ແລະ ກວດກາ ການປະຕິບັດວຽກງານຂອງພະນັກງານ ຢູ່ອົງການໄອຍະການປະຊາຊົນ;
3. ຊີ້ນຳ ວຽກງານຄົ້ນຄວ້າ, ສະເໜີ ຮ່າງກົດໝາຍ ແລະ ນິຕິກຳອື່ນ ຕໍ່ກອງປະຊຸມສະພາແຫ່ງຊາດ ຫລື ຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;
4. ສະເໜີ ຕໍ່ຄະນະປະຈຳສະພາແຫ່ງຊາດ ຕີຄວາມໝາຍຂອງກົດໝາຍ ເພື່ອປະຕິບັດໃຫ້ຖືກຕ້ອງ ແລະ ເປັນເອກະພາບ;
5. ໃຫ້ຄວາມເຫັນ ກ່ຽວກັບການດຳເນີນຄະດີອາຍາ ຊຶ່ງຫົວໜ້າ, ຮອງຫົວໜ້າອົງການໄອຍະການປະຊາຊົນ, ພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍພະນັກງານໄອຍະການປະຊາຊົນທີ່ຖືກຫາວ່າ ເປັນຜູ້ກະທຳຜິດ;
6. ລົບລ້າງຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນຂັ້ນລຸ່ມ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
7. ເຮັດຄຳຖະແຫລງ ກ່ຽວກັບຄະດີ ຕໍ່ສານປະຊາຊົນສູງສຸດ;
8. ສະເໜີຄັດຄ້ານ ຄຳຕັດສິນ ຫລື ຄຳພິພາກສາ ຂອງສານປະຊາຊົນຂັ້ນລຸ່ມ;
9. ສະເໜີ ຮື້ຟື້ນຄະດີ ຕໍ່ສານປະຊາຊົນສູງສຸດ ໃນກໍລະນີທີ່ພົບເຫັນຫລັກຖານໃໝ່ ຕາມການເຫັນດີຂອງຄະນະກຳມະການໄອຍະການປະຊາຊົນ;
10. ສະເໜີ ປະທານປະເທດ ແຕ່ງຕັ້ງ ຫລື ປົດຕຳແໜ່ງ ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ;
11. ກຳນົດໂຄງປະກອບກົງຈັກການຈັດຕັ້ງ, ຈຳນວນບຸກຄະລາກອນ ຂອງອົງການໄອຍະການປະຊາຊົນ;
12. ແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ ຫົວໜ້າ, ຮອງຫົວໜ້າອົງການໄອຍະການປະຊາຊົນ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ ແລະ ພະນັກງານບໍລິຫານ ຂອງອົງການໄອຍະການປະຊາຊົນ;
13. ຮຽກໂຮມ ແລະ ເປັນປະທານ ກອງປະຊຸມ ຄະນະກຳມະການໄອຍະການປະຊາຊົນ;
14. ເຂົ້າຮ່ວມ ກອງປະຊຸມໃຫຍ່ ຜູ້ພິພາກສາ ແລະ ລາຍງານຕໍ່ ຄະນະປະຈຳສະພາແຫ່ງຊາດ ກ່ຽວກັບມະຕິກອງປະຊຸມໃຫຍ່ຜູ້ພິພາກສາ ທີ່ເຫັນວ່າບໍ່ຖືກຕ້ອງ ຕາມລັດຖະທຳມະນູນ ແລະ ກົດໝາຍ;

15. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງອົງການໄອຍະການປະຊາຊົນ ຕໍ່ກອງປະຊຸມສະພາແຫ່ງຊາດ ຫລື ຄະນະປະຈໍາສະພາແຫ່ງຊາດ ໃນເວລາທີ່ສະພາແຫ່ງຊາດ ບໍ່ໄດ້ເປີດກອງປະຊຸມ;
16. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກົດໝາຍໄດ້ກໍານົດໄວ້.

**ມາດຕາ 28. ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ**

ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ມີໜ້າທີ່ຊ່ວຍວຽກຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໃນການປະຕິບັດໜ້າທີ່ ແລະ ຈະໄດ້ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ໃນກໍລະນີທີ່ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕິດຂັດ ແມ່ນ ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ທີ່ໄດ້ຮັບການມອບໝາຍ ເປັນຜູ້ຮັກສາການແທນ.

**ມາດຕາ 29 (ໃໝ່). ສິດ ແລະ ໜ້າທີ່ ຂອງ ຄະນະກໍາມະການໄອຍະການປະຊາຊົນ**

ຄະນະກໍາມະການໄອຍະການປະຊາຊົນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕົກລົງຮັບຮອງເອົາ ແຜນຍຸດທະສາດ ກ່ຽວກັບການພັດທະນາວຽກງານໄອຍະການ;
2. ຄົ້ນຄວ້າຜ່ານ ຮ່າງ ລະບຽບກົດໝາຍ ຂອງອົງການໄອຍະການປະຊາຊົນ;
3. ຕົກລົງ ຮື້ຟື້ນຄະດີ ;
4. ຄົ້ນຄວ້າຜ່ານ ກ່ຽວກັບ ການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕໍາແໜ່ງ ຫົວໜ້າ ແລະ ຮອງຫົວໜ້າຫ້ອງການ, ບັນດາກົມ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມວຽກງານໄອຍະການຂອງອົງການໄອຍະການປະຊາຊົນສູງສຸດ, ຫົວໜ້າ ແລະ ຮອງຫົວໜ້າອົງການໄອຍະການປະຊາຊົນພາກ, ແຂວງ, ນະຄອນ ແລະ ເຂດ;
5. ຄົ້ນຄວ້າຜ່ານ ກ່ຽວກັບການສ້າງຕັ້ງ ຫລື ຍຸບເລີກ ກົງຈັກຂອງອົງການໄອຍະການປະຊາຊົນສູງສຸດ;
6. ຄົ້ນຄວ້າ, ຕົກລົງແຜນການ, ແຜນງົບປະມານປະຈໍາປີ ຂອງອົງການໄອຍະການປະຊາຊົນ;
7. ຕົກລົງບັນຫາອື່ນ ທີ່ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເຫັນວ່າມີຄວາມຈໍາເປັນ.

**ມາດຕາ 30. ສິດ ແລະ ໜ້າທີ່ ຂອງຫົວໜ້າອົງການໄອຍະການປະຊາຊົນພາກ**

ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຫົວໜ້າອົງການໄອຍະການປະຊາຊົນພາກ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຊີ້ນໍາ ແລະ ນໍາພາ ການຕິດຕາມກວດກາ ການປະຕິບັດກົດໝາຍ;

2. ຊີ້ນຳ, ນຳພາ ແລະ ກວດກາ ການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງອົງການໄອຍະການປະຊາຊົນພາກ ແລະ ອົງການໄອຍະການປະຊາຊົນແຂວງ, ນະຄອນ;
3. ໃຫ້ຄຳແນະນຳທາງດ້ານກົດໝາຍ ແກ່ອົງການໄອຍະການປະຊາຊົນແຂວງ, ນະຄອນ;
4. ລົບລ້າງຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນຂັ້ນລຸ່ມ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
5. ເຮັດຄຳຖະແຫລງ ກ່ຽວກັບຄະດີ ຕໍ່ສານປະຊາຊົນພາກ;
6. ສະເໜີຄັດຄ້ານ ຄຳຕັດສິນ ຂອງສານຂັ້ນລຸ່ມ ແລະ ຄຳພິພາກສາ ຂອງສານຂັ້ນຂອງຕົນ;
7. ລາຍງານ ສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນພາກ ຕໍ່ຫົວໜ້າອົງການໄອຍະການປະຊາຊົນສູງສຸດ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 31. ຮອງຫົວໜ້າອົງການໄອຍະການປະຊາຊົນພາກ**

ຮອງຫົວໜ້າອົງການໄອຍະການປະຊາຊົນພາກ ມີໜ້າທີ່ຊ່ວຍວຽກ ຫົວໜ້າອົງການໄອຍະການປະຊາຊົນພາກ ໃນການປະຕິບັດໜ້າທີ່ ແລະ ຈະໄດ້ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງຫົວໜ້າອົງການໄອຍະການປະຊາຊົນພາກ.

ໃນກໍລະນີທີ່ ຫົວໜ້າອົງການໄອຍະການປະຊາຊົນພາກ ຕິດຂັດ ແມ່ນ ຮອງຫົວໜ້າອົງການໄອຍະການປະຊາຊົນພາກ ທີ່ໄດ້ຮັບການມອບໝາຍ ເປັນຜູ້ຮັກສາການແທນ.

**ມາດຕາ 32. ສິດ ແລະ ໜ້າທີ່ ຂອງ ຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນ**

ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ ແລະ ນຳພາ ການຕິດຕາມກວດກາການປະຕິບັດກົດໝາຍ;
2. ຊີ້ນຳ, ນຳພາ ແລະ ກວດກາ ການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງອົງການໄອຍະການປະຊາຊົນຂັ້ນຂອງຕົນ ແລະ ອົງການໄອຍະການປະຊາຊົນເຂດ;
3. ໃຫ້ຄຳແນະນຳທາງດ້ານກົດໝາຍ ແກ່ອົງການໄອຍະການປະຊາຊົນເຂດ;
4. ລົບລ້າງຄຳສັ່ງ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຂອງຫົວໜ້າອົງການໄອຍະການປະຊາຊົນເຂດ;
5. ເຮັດຄຳຖະແຫລງ ແລະ ສັ່ງຟ້ອງຜູ້ຖືກຫາ ຂຶ້ນສານປະຊາຊົນແຂວງ, ນະຄອນ;
6. ສະເໜີຄັດຄ້ານ ຄຳຕັດສິນຂອງສານຂັ້ນລຸ່ມ, ຄຳຕັດສິນ ແລະ ຄຳພິພາກສາຂອງສານຂັ້ນຂອງຕົນ;
7. ລາຍງານ ສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ຫົວໜ້າອົງການໄອຍະການປະຊາຊົນພາກ ແລະ ອົງການໄອຍະການປະຊາຊົນສູງສຸດ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 33. ຮອງຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນ**

ຮອງຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນ ມີໜ້າທີ່ຊ່ວຍວຽກ ຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນ ໃນການປະຕິບັດໜ້າທີ່ ແລະ ຈະໄດ້ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນ.

ໃນກໍລະນີທີ່ ຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນ ຕິດຂັດ ແມ່ນ ຮອງຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນ ທີ່ໄດ້ຮັບການມອບໝາຍນັ້ນ ເປັນຜູ້ຮັກສາການແທນ.

**ມາດຕາ 34 (ໃໝ່). ສິດ ແລະ ໜ້າທີ່ ຂອງ ຫົວໜ້າອົງການໄອຍະການປະຊາຊົນເຂດ**

ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຫົວໜ້າອົງການໄອຍະການປະຊາຊົນເຂດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນໍາ ແລະ ນໍາພາ ການຕິດຕາມກວດກາການປະຕິບັດກົດໝາຍ ໃນຂອບເຂດເມືອງ ທີ່ຂຶ້ນກັບຕົນ;
2. ຊີ້ນໍາ, ນໍາພາ ແລະ ກວດກາ ການຈັດຕັ້ງປະຕິບັດໜ້າທີ່ວຽກງານ ຂອງອົງການໄອຍະການປະຊາຊົນເຂດ ແລະ ພະນັກງານໄອຍະການປະຊາຊົນ ທີ່ສົ່ງໄປປະຈໍາຢູ່ເມືອງ;
3. ເຮັດຄໍາຖະແຫລງ ແລະ ສັ່ງຟ້ອງຜູ້ຖືກຫາ ຂຶ້ນສານປະຊາຊົນເຂດ;
4. ສະເໜີຄັດຄ້ານ ຄໍາຕັດສິນ ຂອງສານປະຊາຊົນເຂດ;
5. ລາຍງານ ສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກົດໝາຍໄດ້ກໍານົດໄວ້.

**ມາດຕາ 35 (ໃໝ່). ຮອງຫົວໜ້າອົງການໄອຍະການປະຊາຊົນເຂດ**

ຮອງຫົວໜ້າອົງການໄອຍະການປະຊາຊົນເຂດ ມີໜ້າທີ່ຊ່ວຍວຽກ ຫົວໜ້າອົງການໄອຍະການປະຊາຊົນເຂດ ແລະ ຮັບຜິດ ຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍ ຂອງຫົວໜ້າອົງການໄອຍະການປະຊາຊົນເຂດ.

ໃນເວລາທີ່ ຫົວໜ້າອົງການໄອຍະການປະຊາຊົນເຂດ ຕິດຂັດ ແມ່ນ ຮອງຫົວໜ້າອົງການໄອຍະການປະຊາຊົນເຂດ ທີ່ໄດ້ຮັບການມອບໝາຍນັ້ນ ເປັນຜູ້ຮັກສາການແທນ.

**ມາດຕາ 36 (ໃໝ່). ສິດ ແລະ ໜ້າທີ່ ຂອງ ພະນັກງານໄອຍະການປະຊາຊົນ**

ຕາມການມອບໝາຍ ຂອງຫົວໜ້າອົງການໄອຍະການປະຊາຊົນ ພະນັກງານໄອຍະການປະຊາຊົນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ດໍາເນີນການສືບສວນ-ສອບສວນ ຄະດີ;

2. ເອົາຄຳໃຫ້ການ ຂອງໂຈດ, ຈຳເລີຍ ແລະ ບຸກຄົນອື່ນ ທີ່ເຂົ້າຮ່ວມໃນການດຳເນີນຄະດີ;
3. ເກັບກຳຂໍ້ມູນຫລັກຖານ ກ່ຽວກັບຄະດີ;
4. ເຂົ້າຮ່ວມການດຳເນີນຄະດີກັບ ເຈົ້າຫນ້າທີ່ສືບສວນ - ສອບສວນ;
5. ຄົ້ນຄວ້າ ສະຫລຸບ ສຳນວນຄະດີ, ຮ່າງຄຳຖະແຫລງ ຫລື ຄຳຕົກລົງ ຂອງຫົວຫນ້າອົງການໄອຍະການປະຊາຊົນ;
6. ເຂົ້າຮ່ວມປະຊຸມສານ ອາຍາ, ແພ່ງ, ການຄ້າ, ຄອບຄົວ ແລະ ເດັກ;
7. ຕິດຕາມກວດກາການປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;
8. ຕິດຕາມກວດກາສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ;
9. ໄດ້ຮັບການບຳລຸງ ແລະ ຍົກລະດັບ ກ່ຽວກັບວຽກງານໄອຍະການ;
10. ປະຕິບັດສິດ ແລະ ຫນ້າທີ່ອື່ນ ຕາມທີ່ກົດຫມາຍໄດ້ກຳນົດໄວ້.

**ມາດຕາ 37(ໃຫມ່). ສິດ ແລະ ຫນ້າທີ່ ຂອງ ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ**

ຕາມການມອບຫມາຍ ຂອງພະນັກງານໄອຍະການປະຊາຊົນ ຜູ້ຊ່ວຍ ມີສິດ ແລະ ຫນ້າທີ່ ດັ່ງນີ້:

1. ເຂົ້າຮ່ວມ ແລະ ບັນທຶກເອົາຄຳໃຫ້ການ ຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ;
2. ຊ່ວຍຄົ້ນຄວ້າ, ສະຫລຸບສຳນວນຄະດີ ແລະ ຮ່າງຄຳຖະແຫລງ ຂອງຫົວຫນ້າອົງການໄອຍະການປະຊາຊົນ;
3. ໃສ່ເລກທີຄະດີ, ຈັດສຳນວນຄະດີ ແລະ ເຮັດບັນຊີເອກະສານ, ເກັບມ້ຽນ ແລະ ເຮັດສະຖິຕິ ສຳນວນຄະດີ;
4. ເຮັດບັນຊີ ແລະ ຕິດຕາມການເກັບມ້ຽນຂອງກາງຄະດີ;
5. ເຮັດບັນຊີ ແລະ ສະຖິຕິ ຜູ້ຖືກຫາ, ນັກໂທດ;
6. ເຮັດຫມາຍຮຽກ, ຫມາຍເຊີນ;
7. ໄດ້ຮັບການບຳລຸງ ແລະ ຍົກລະດັບ ກ່ຽວກັບວຽກງານໄອຍະການ;
8. ປະຕິບັດສິດ ແລະ ຫນ້າທີ່ອື່ນ ຕາມການມອບຫມາຍ.

# ພາກທີ III

# ການເຄື່ອນໄຫວ ຂອງອົງການໄອຍະການປະຊາຊົນ

## ໝວດທີ 1

## ການຕິດຕາມກວດກາທົ່ວໄປ

**ມາດຕາ 38 (ໃໝ່). ການຕິດຕາມກວດກາທົ່ວໄປ**

ການຕິດຕາມກວດກາທົ່ວໄປ ແມ່ນ ການຕິດຕາມກວດກາການປະຕິບັດກົດໝາຍ ຂອງບັນດາກະຊວງ, ອົງການ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ ແລະ ພົນລະເມືອງ ເພື່ອໃຫ້ຖືກຕ້ອງ ແລະ ເປັນເອກະພາບ, ຕິດຕາມກວດກາການອອກນິຕິກຳຂອງບັນດາອົງການຈັດຕັ້ງດັ່ງກ່າວ ເພື່ອໃຫ້ສອດຄ່ອງກັບກົດໝາຍ.

**ມາດຕາ 39. ສິດ ແລະ ໜ້າທີ່ ຂອງ ອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາທົ່ວໄປ**

ໃນການຕິດຕາມກວດກາທົ່ວໄປ ອົງການໄອຍະການປະຊາຊົນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາການປະຕິບັດກົດໝາຍ ຂອງອົງການລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ, ລັດຖະກອນ, ພົນລະເມືອງ ແລະ ນິຕິກຳ ຂອງອົງການກ່ຽວຂ້ອງດັ່ງກ່າວ ຕາມຄຳຮ້ອງຟ້ອງ, ຄຳສະເໜີ ຂອງບຸກຄົນ ຫລື ການຈັດຕັ້ງ. ຖ້າເຫັນວ່າ ມີການລະເມີດລະບຽບກົດໝາຍ ຕ້ອງສະເໜີ ໃຫ້ອົງການທີ່ກ່ຽວຂ້ອງແກ້ໄຂ. ໃນກໍລະນີທີ່ການລະເມີດນັ້ນ ຫາກເປັນການກະທຳຜິດ ທາງອາຍາ ຫົວໜ້າອົງການໄອຍະການປະຊາຊົນ ຕ້ອງນຳມາດຳເນີນຄະດີຕາມກົດໝາຍ;
2. ທວງເອົາ ນິຕິກຳ ແລະ ເຊີນບຸກຄົນ ຫລື ຜູ້ຕາງໜ້າ ການຈັດຕັ້ງທີ່ກ່ຽວຂ້ອງ ມາອະທິບາຍ ກ່ຽວກັບການລະເມີດກົດໝາຍ;
3. ສະເໜີ ໂຈະ ຫລື ລົບລ້າງ ນິຕິກຳ ຂອງກະຊວງ, ອົງການ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ ທີ່ບໍ່ສອດຄ່ອງກັບກົດໝາຍ ຕໍ່ອົງການຈັດຕັ້ງດັ່ງກ່າວ ຫລື ຕໍ່ອົງການຈັດຕັ້ງຂັ້ນເທິງທີ່ກ່ຽວຂ້ອງ;
4. ສະເໜີ ຕໍ່ກະຊວງ, ອົງການ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ວິສາຫະກິດ ກ່ຽວກັບ ການຈຳກັດ ແລະ ລົບລ້າງ ການລະເມີດກົດໝາຍ, ສາເຫດ ແລະ ເງື່ອນໄຂ ທີ່ພາໃຫ້ການກະທຳຜິດເກີດຂຶ້ນ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 40. ຜົນບັງຄັບປະຕິບັດ ນິຕິກຳ ຂອງ ອົງການໄອຍະການປະຊາຊົນ**

ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ຂອງອົງການໄອຍະການປະຊາຊົນທຸກຂັ້ນ ທີ່ວາງອອກໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນ ມີຜົນບັງຄັບປະຕິບັດ ສຳລັບທຸກອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ, ລັດຖະກອນ ແລະ ພົນລະເມືອງ.

ຄຳສະເໜີ ຂອງອົງການໄອຍະການປະຊາຊົນ ກ່ຽວກັບການລະເມີດກົດໝາຍ ຕໍ່ຂະແໜງການທີ່ກ່ຽວຂ້ອງ ຕ້ອງໄດ້ຮັບການພິຈາລະນາ ຢ່າງຊ້າບໍ່ໃຫ້ກາຍ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີ ເປັນຕົ້ນໄປ. ໃນກໍລະນີ ທີ່ຄຳສະເໜີ ບໍ່ໄດ້ຮັບການປະຕິບັດ ອົງການໄອຍະການປະຊາຊົນ ມີສິດສະເໜີ ຕໍ່ຂັ້ນເທິງ ຂອງຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາ ແລະ ແກ້ໄຂ.

## ໝວດທີ 2
## ການຕິດຕາມກວດກາການປະຕິບັດກົດໝາຍ
## ຂອງ ອົງການສືບສວນ - ສອບສວນ

**ມາດຕາ 41. ການຕິດຕາມກວດກາການປະຕິບັດກົດໝາຍ ຂອງ ອົງການສືບສວນ - ສອບສວນ**

ການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ - ສອບສວນ ແມ່ນ ການຕິດຕາມກວດກາການປະຕິບັດກົດໝາຍ ໃນຂັ້ນຕອນການສືບສວນ - ສອບສວນ ໃຫ້ຖືກຕ້ອງ, ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ເພື່ອ:

1. ຊອກໃຫ້ເຫັນສະພາບການປະຕິບັດລະບຽບກົດໝາຍ ຂອງອົງການສືບສວນ-ສອບສວນ ມີຄວາມຖືກຕ້ອງ ຫລື ມີການລະເມີດກົດໝາຍ;
2. ຊອກຮູ້ ການນຳໃຊ້ມາດຕະການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ເຊັ່ນ ການກວດຄົ້ນເຄຫະສະຖານ, ການກັກຕົວ, ການຈັບຕົວ, ການກັກຂັງພາງ, ການປ່ອຍຕົວພາງ ຜູ້ຖືກຫາ ໄດ້ປະຕິບັດຖືກຕ້ອງຕາມກົດໝາຍ ຫລື ມີການລະເມີດກົດໝາຍ;
3. ໃຫ້ອົງການສືບສວນ-ສອບສວນ ປະຕິບັດລະບຽບກົດໝາຍ ກ່ຽວກັບການດຳເນີນຄະດີອາຍາ ຢ່າງເຂັ້ມງວດ;
4. ໃຫ້ ການອອກ ຫລື ບໍ່ອອກ ຄຳສັ່ງເປີດການສືບສວນ-ສອບສວນ ຂອງຫົວໜ້າ ອົງການສືບສວນ-ສອບສວນ ມີ ຫລື ບໍ່ມີ ຫລັກຖານໜັກແໜ້ນ ແລະ ຖືກຕ້ອງຕາມກົດໝາຍ;
5. ຄົ້ນຄວ້າ, ຊອກໃຫ້ເຫັນທຸກການກະທຳຜິດທີ່ເກີດຂຶ້ນ ແລະ ບໍ່ໃຫ້ຜູ້ກະທຳຜິດ ພົ້ນຈາກການລົງໂທດຕາມກົດໝາຍ;
6. ຊອກໃຫ້ເຫັນ ສາເຫດ ແລະ ເງື່ອນໄຂ ຂອງການກໍ່ອາດຊະຍາກຳ ຫລື ການກະທຳຜິດ ເພື່ອວາງມາດຕະການແກ້ໄຂ.

**ມາດຕາ 42. ສິດ ແລະ ໜ້າທີ່ ຂອງ ອົງການໄອຍະການປະຊາຊົນ**

ໃນການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ອົງການໄອຍະການປະຊາຊົນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ທວງເອົາສຳນວນຄະດີອາຍາ, ເອກະສານ, ຂອງກາງ ແລະ ຂໍ້ມູນຕ່າງໆ ກ່ຽວກັບການກະທຳຜິດ ຈາກອົງການສືບສວນ - ສອບສວນ;
2. ເຂົ້າຮ່ວມການສືບສວນ-ສອບສວນ ຄະດີອາຍາ ຫລື ຈະດຳເນີນການສືບສວນ-ສອບສວນ ດ້ວຍຕົນເອງກໍໄດ້ ໃນກໍລະນີທີ່ຈຳເປັນ;
3. ລົບລ້າງຄຳສັ່ງ ຂອງອົງການສືບສວນ - ສອບສວນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຫລື ບໍ່ມີເຫດຜົນ;
4. ໃຫ້ຄຳແນະນຳ ເປັນລາຍລັກອັກສອນ ກ່ຽວກັບການປະຕິບັດມາດຕະການສືບສວນ-ສອບສວນ, ມາດຕະການສະກັດກັ້ນ ແລະ ການຊອກຫາຜູ້ກະທຳຜິດ, ການຈຳແນກການກະທຳຜິດ;
5. ອອກຄຳສັ່ງຕ່າງໆ ເປັນຕົ້ນ ຄຳສັ່ງ ກັກຕົວ, ຈັບຕົວ, ກັກຂັງພາງ, ປ່ອຍຕົວພາງ ຜູ້ຖືກຫາ, ກວດຄົ້ນເຄຫະສະຖານ ກ່ຽວກັບການກະທຳຜິດ ທີ່ບໍ່ເຊິ່ງໜ້າ ຫລື ໃນກໍລະນີທີ່ບໍ່ຮີບດ່ວນ;
6. ຕໍ່ກຳນົດເວລາ ສືບສວນ-ສອບສວນ ແລະ ກຳນົດເວລາກັກຂັງພາງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
7. ສົ່ງສຳນວນຄະດີຄືນໃຫ້ ອົງການສືບສວນ-ສອບສວນ ພ້ອມດ້ວຍຄຳແນະນຳ ກ່ຽວກັບການສືບສວນ - ສອບສວນ ເພີ່ມເຕີມ;
8. ອອກຄຳສັ່ງໃຫ້ ເຈົ້າໜ້າທີ່ສືບສວນ-ສອບສວນ ທີ່ໄດ້ລະເມີດກົດໝາຍໃນການດຳເນີນຄະດີ ຢຸດເຊົາການສືບສວນ-ສອບສວນ;
9. ອອກຄຳສັ່ງ ເປີດການສືບສວນ-ສອບສວນ, ຊັດມ້ຽນຄະດີ ຫລື ໂຈະການດຳເນີນຄະດີ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 43. ຜົນບັງຄັບໃນການປະຕິບັດ ນິຕິກຳ ຂອງອົງການໄອຍະການປະຊາຊົນ**

ທຸກຄຳສັ່ງ ແລະ ຄຳແນະນຳ ຂອງຫົວໜ້າອົງການໄອຍະການປະຊາຊົນ ມີຜົນບັງຄັບປະຕິບັດ ສຳລັບອົງການສືບສວນ - ສອບສວນ.

## ໝວດທີ 3
## ການສັ່ງຟ້ອງຂຶ້ນສານ

**ມາດຕາ 44 (ໃໝ່). ການສັ່ງຟ້ອງຜູ້ຖືກຫາ ຂຶ້ນສານ**

ການສັ່ງຟ້ອງຜູ້ຖືກຫາ ຂຶ້ນສານ ແມ່ນ ການອອກຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນ ທີ່ບົ່ງຂໍ້ກ່າວຫາໃສ່ຜູ້ຖືກຫາ ພ້ອມທັງສົ່ງ ສຳນວນຄະດີ, ຜູ້ຖືກຫາ ແລະ ຂອງກາງ ໃຫ້ສານພິຈາລະນາຕັດສິນຕາມກົດໝາຍ.

ມີແຕ່ ອົງການໄອຍະການປະຊາຊົນເທົ່ານັ້ນ ມີສິດ ສັ່ງຟ້ອງຜູ້ຖືກຫາ ຂຶ້ນສານ.

ອົງການໄອຍະການປະຊາຊົນ ເປັນຜູ້ຕາງໜ້າລັດ ແລະ ເປັນໂຈດ ໃນຄະດີອາຍາ.

ສໍາລັບຂັ້ນຕອນການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ.

**ມາດຕາ 45 (ໃໝ່). ການສັ່ງຟ້ອງ ແລະ ການຖະແຫລງ ຂຶ້ນສານ**

ກ່ອນຈະທໍາການສັ່ງຟ້ອງຜູ້ຖືກຫາ ແລະ ຖະແຫລງຂຶ້ນສານນັ້ນ ອົງການໄອຍະການປະຊາຊົນ ຕ້ອງຄົ້ນຄວ້າສໍານວນຄະດີ ຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ, ຮັບປະກັນໃຫ້ມີຫລັກຖານຮັດກຸມ ແລະ ໜັກແໜ້ນ ເພື່ອຢັ້ງຢືນຄໍາສັ່ງຟ້ອງ ແລະ ຄໍາຖະແຫລງຂອງຕົນ ຕໍ່ສານປະຊາຊົນ.

ອົງການໄອຍະການປະຊາຊົນ ອາດຈະທໍາການສັ່ງຟ້ອງຜູ້ຖືກຫາ ຂຶ້ນສານໂດຍກົງ ໂດຍບໍ່ຕ້ອງເປີດການສືບສວນ-ສອບສວນກໍໄດ້ ໃນກໍລະນີ ການກະທໍາຜິດໃນສະຖານລະຫຸໂທດ ຫລື ໂທສານຸໂທດ ທີ່ກົດໝາຍກໍານົດໂທດຕັດອິດສະລະພາບສູງສຸດ ບໍ່ເກີນສາມປີ ຖ້າຫາກມີຫລັກຖານຄົບຖ້ວນແລ້ວ.

ຄໍາສັ່ງຟ້ອງ ຂອງອົງການໄອຍະການປະຊາຊົນ ຕ້ອງແຈ້ງໃຫ້ຜູ້ຖືກຫາຊາບ ຢ່າງໜ້ອຍ ສາມວັນ ກ່ອນສົ່ງສໍານວນຄະດີ ໃຫ້ສານປະຊາຊົນ ພິຈາລະນາ.

## ໝວດທີ 4
## ການຕິດຕາມກວດກາການປະຕິບັດກົດໝາຍ ໃນການດໍາເນີນຄະດີຢູ່ສານ

**ມາດຕາ 46. ການຕິດຕາມກວດກາການປະຕິບັດກົດໝາຍໃນການດໍາເນີນຄະດີຢູ່ສານ**

ອົງການໄອຍະການປະຊາຊົນ ຕິດຕາມກວດກາການປະຕິບັດກົດໝາຍໃນການດໍາເນີນຄະດີຢູ່ສານ ໃຫ້ດໍາເນີນຢ່າງຮອບດ້ານ, ຄົບຖ້ວນ, ພາວະວິໄສ ແລະ ຖືກຕ້ອງ ຕາມຂັ້ນຕອນ ເພື່ອໃຫ້ຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ຫລື ຄໍາພິພາກສາຂອງສານ ຖືກຕ້ອງ ແລະ ຍຸຕິທໍາ.

**ມາດຕາ 47 (ໃໝ່). ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດກົດໝາຍ ໃນການດໍາເນີນຄະດີອາຍາຢູ່ສານ**

ການຕິດຕາມກວດກາການປະຕິບັດກົດໝາຍໃນການດໍາເນີນຄະດີອາຍາຢູ່ສານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ອົງການໄອຍະການປະຊາຊົນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຂົ້າຮ່ວມໃນການດໍາເນີນຄະດີອາຍາ ຢູ່ທີ່ປະຊຸມສານຂັ້ນຂອງຕົນ ເພື່ອກ່າວຟ້ອງ ແລະ ຖະແຫລງຕໍ່ສານ, ກວດກາການໄຕ່ສວນຄະດີໃນທີ່ປະຊຸມສານ ໃຫ້ດໍາເນີນໄປຢ່າງຖືກຕ້ອງ ຕາມກົດໝາຍ;

2. ກວດກາ ຄຳຕັດສິນ ຫລື ຄຳພິພາກສາຂອງສານ ຖືກຕ້ອງ ຫລື ບໍ່ຖືກຕ້ອງ ຕາມການສັ່ງຟ້ອງຂອງຕົນ ລວມທັງການວາງໂທດ ແລະ ການນຳໃຊ້ມາດຕາກົດໝາຍໃສ່ການກະທຳຜິດນັ້ນ;
3. ສະເໜີຄັດຄ້ານ ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາຄະດີອາຍາ ທີ່ຍັງບໍ່ທັນໃຊ້ໄດ້ຢ່າງເດັດຂາດຂອງສານປະຊາຊົນຂັ້ນລຸ່ມ ແລະ ຂັ້ນຂອງຕົນ ທີ່ເຫັນວ່າ ບໍ່ມີເຫດຜົນໜັກແໜ້ນ ຫລື ບໍ່ຖືກຕ້ອງຕາມກົດໝາຍ;
4. ຖອນຄຳສະເໜີຄັດຄ້ານຂອງຕົນ ກ່ອນສານຕັດສິນ;
5. ສະເໜີ ຮື້ຟື້ນຄະດີຕາມກົດໝາຍ ໃນກໍລະນີ ທີ່ໄດ້ພົບເຫັນຫລັກຖານໃໝ່;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 48(ໃໝ່). ສິດ ແລະ ໜ້າທີ່ ຂອງ ອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີ ແພ່ງ, ການຄ້າ, ຄອບຄົວ ແລະ ເດັກ**

ເພື່ອປົກປ້ອງຜົນປະໂຫຍດຂອງລັດ ແລະ ສັງຄົມ ຫລື ຂອງບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ໃນການດຳເນີນຄະດີແພ່ງ, ການຄ້າ, ຄອບຄົວ ແລະ ເດັກ ອົງການໄອຍະການປະຊາຊົນ ມີສິດ ແລະ ໜ້າທີ່ ດັ່ງນີ້:

ໃນກໍລະນີທີ່ ບໍ່ມີຜູ້ຮ້ອງຟ້ອງ:

1. ເປັນໂຈດທາງແພ່ງ;
2. ດຳເນີນການປະກອບຫລັກຖານໃນຄະດີ ແລະ ທຳການຮ້ອງຟ້ອງ ຕໍ່ສານປະຊາຊົນ;
3. ເຮັດຄຳຖະແຫລງເປັນລາຍລັກອັກສອນ ຕໍ່ສານປະຊາຊົນ;
4. ເຂົ້າຮ່ວມ ເພື່ອຖະແຫລງ ໃນທີ່ປະຊຸມສານຂັ້ນຂອງຕົນ.

ໃນກໍລະນີທີ່ ມີຜູ້ຮ້ອງຟ້ອງ ຫລື ໂຈດທາງແພ່ງ:

1. ຄົ້ນຄວ້າສຳນວນຄະດີ ແລະ ເຮັດຄຳຖະແຫລງເປັນລາຍລັກອັກສອນ ຕໍ່ສານປະຊາຊົນ;
2. ເຂົ້າຮ່ວມ ເພື່ອຖະແຫລງ ໃນທີ່ປະຊຸມສານຂັ້ນຂອງຕົນ;
3. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກົດໝາຍໄດ້ກຳນົດໄວ້.

**ມາດຕາ 49(ໃໝ່). ການຕິດຕາມກວດກາການດຳເນີນຄະດີ ແພ່ງ, ການຄ້າ ແລະ ຄອບຄົວ**

ການຕິດຕາມກວດກາການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີແພ່ງ, ການຄ້າ ແລະ ຄອບຄົວ ທົ່ວໄປ ອົງການໄອຍະການປະຊາຊົນ ມີສິດ, ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ບົດສະຫລຸບ ຫລື ສຳນວນຄະດີ ທີ່ສານປະຊາຊົນ ສົ່ງມາໃຫ້;
2. ສົ່ງ ຄຳຖະແຫລງ ເປັນລາຍລັກອັກສອນ ໃນກໍລະນີທີ່ຄະດີ ມີຄວາມຫຍຸ້ງຍາກ, ສັບສົນ;
3. ເຂົ້າຮ່ວມ ເພື່ອຖະແຫລງ ໃນທີ່ປະຊຸມສານຂັ້ນຂອງຕົນ ແລະ ມອບຄຳຖະແຫລງໃຫ້ສານ;

4. ສະເໜີຄັດຄ້ານ ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ຄະດີ ແພ່ງ, ການຄ້າ ແລະ ຄອບຄົວ ທີ່ຍັງບໍ່ທັນໃຊ້ໄດ້ຢ່າງເດັດຂາດ ຂອງສານປະຊາຊົນຂັ້ນລຸ່ມ ແລະ ຂັ້ນຂອງຕົນ ທີ່ເຫັນວ່າ ບໍ່ມີເຫດຜົນໜັກແໜ້ນ ຫລື ບໍ່ຖືກຕ້ອງຕາມກົດໝາຍ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກົດໝາຍໄດ້ກຳນົດໄວ້.

## ໝວດທີ 5
## ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ

### ມາດຕາ 50 (ໃໝ່). ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ

ການຕິດຕາມກວດກາການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແມ່ນ ການຕິດຕາມກວດກາ ການຈັດຕັ້ງປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫລື ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ກົດໝາຍໄດ້ກຳນົດໄວ້.

### ມາດຕາ 51. ສິດ ແລະ ໜ້າທີ່ ຂອງ ອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ

ໃນການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ອົງການໄອຍະການປະຊາຊົນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສະເໜີໃຫ້ ພະນັກງານປະຕິບັດຄຳຕັດສິນຂອງສານ:
   - ລາຍງານສະພາບການປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫລື ຄຳພິພາກສາຂອງສານ;
   - ປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫລື ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຊຶ່ງຍັງບໍ່ທັນໄດ້ຮັບການປະຕິບັດ;
2. ກວດກາຄວາມຖືກຕ້ອງຂອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເປັນຕົ້ນ ການປະຕິບັດກົດໝາຍ, ການຊຳລະທາງແພ່ງ, ການເກັບ ແລະ ການມອບຄ່າທຳນຽມສານ, ຄ່າອາກອນ ແລະ ຄ່າປັບໃໝເຂົ້າງົບປະມານ, ການຮິບຊັບ ແລະ ການຮິບວັດຖຸສິ່ງຂອງ ເຂົ້າເປັນຂອງລັດ, ການປະຕິບັດໂທດທາງອາຍາ;
3. ສະເໜີ ປ່ຽນແປງ, ລົບລ້າງ ຫລື ໂຈະ ການປະຕິບັດທີ່ບໍ່ຖືກຕ້ອງ ຕາມຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫລື ຄຳພິພາກສາຂອງສານ.

ທຸກຄຳສະເໜີ ຂອງອົງການໄອຍະການປະຊາຊົນ ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງຈັດຕັ້ງປະຕິບັດ ພາຍໃນ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີ ເປັນຕົ້ນໄປ.

# ໝວດທີ 6
## ການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ

### ມາດຕາ 52. ການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ

ການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານ ແມ່ນ ເພື່ອໃຫ້ປະຕິບັດຖືກຕ້ອງຕາມລະບຽບກົດໝາຍ ແລະ ເງື່ອນໄຂ ຂອງການກັກຕົວ, ການກັກຂັງ, ການດັດສ້າງ, ການປະຕິບັດໂທດຕັດອິດສະລະພາບ ແລະ ມາດຕະການບັງຄັບອື່ນຂອງສານ.

### ມາດຕາ 53. ສິດ ແລະ ໜ້າທີ່ ຂອງ ອົງການໄອຍະການປະຊາຊົນ

ໃນການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ອົງການໄອຍະການປະຊາຊົນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊອກຮູ້ ການກັກຕົວ, ການກັກຂັງ, ການຍົກຍ້າຍ, ການອອກໄປປິ່ນປົວ ແລະ ການປ່ອຍຕົວ ຜູ້ຖືກຫາ, ຈໍາເລີຍ, ຜູ້ຖືກດັດສ້າງ ຫລື ນັກໂທດ ປະຕິບັດຖືກຕ້ອງ ຫລື ບໍ່ຖືກຕ້ອງ ຕາມທີ່ກົດໝາຍໄດ້ກໍານົດໄວ້ ເພື່ອວາງມາດຕະການແກ້ໄຂໃຫ້ທັນການ;
2. ລົງກວດກາ ສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານ ຢ່າງເປັນລະບົບ ຫລື ໃນເວລາໃດກໍໄດ້ ຕາມທີ່ກົດໝາຍໄດ້ກໍານົດໄວ້;
3. ກວດກາເອກະສານ ກ່ຽວກັບການກັກຕົວ, ການຈັບຕົວ, ການກັກຂັງ, ການປ່ອຍຕົວ, ການດັດສ້າງ ແລະ ການປະຕິບັດມາດຕະການບັງຄັບອື່ນຂອງສານ;
4. ກວດກາການຄຸ້ມຄອງ ຜູ້ຖືກກັກຕົວ, ກັກຂັງ, ດັດສ້າງ ແລະ ປະຕິບັດມາດຕະການບັງຄັບອື່ນຂອງສານ ພ້ອມທັງສອບຖາມບຸກຄົນດັ່ງກ່າວ;
5. ກວດກາການກະທໍາ ຂອງເຈົ້າໜ້າທີ່ ຕໍ່ບຸກຄົນທີ່ຖືກ ກັກຕົວ, ຈັບຕົວ, ກັກຂັງ, ດັດສ້າງ ແລະ ປະຕິບັດມາດຕະການບັງຄັບອື່ນຂອງສານ. ໃນກໍລະນີທີ່ພົບເຫັນການກະທໍາ ຂອງເຈົ້າໜ້າທີ່ ເປັນການລະເມີດລະບຽບກົດໝາຍ ຕ້ອງຕັກເຕືອນ. ຖ້າຫາກເປັນການກະທໍາຜິດທາງອາຍາ ກໍຕ້ອງດໍາເນີນຄະດີ ຕາມກົດໝາຍ;
6. ສັ່ງໃຫ້ປ່ອຍຕົວໃນທັນໃດ ບຸກຄົນທີ່ຖືກ ກັກຕົວ, ຈັບຕົວ, ກັກຂັງ, ດັດສ້າງ ຫລື ຖືກປະຕິບັດມາດຕະການບັງຄັບອື່ນຂອງສານ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

7. ເຂົ້າຮ່ວມ, ຄົ້ນຄວ້າ, ພິຈາລະນາ, ຄັດເລືອກ, ຈັດແບ່ງປະເພດ ແລະ ເຮັດບັນຊີນັກໂທດ ທີ່ມີເງື່ອນໄຂ ໄດ້ຮັບການອະໄພຍະໂທດ ແລະ ກວດກາການຈັດຕັ້ງປະຕິບັດ ການໃຫ້ອະໄພຍະໂທດ ຕາມລັດຖະດຳລັດຂອງປະທານປະເທດ;
8. ກວດບັນຊີລາຍຊື່ ຜູ້ຖືກຫາ, ຈຳເລີຍ, ຜູ້ຖືກດັດສ້າງ ຫລື ນັກໂທດ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ, ຜູ້ທີ່ໄດ້ຮັບອະນຸຍາດໄປປິ່ນປົວ ຫລື ນັກໂທດ ທີ່ໄດ້ຮັບອະນຸຍາດໃຫ້ຍົກຍ້າຍ ຈາກບ່ອນໜຶ່ງ ໄປປະຕິບັດໂທດ ຢູ່ບ່ອນອື່ນ;
9. ກວດກາຄຳສັ່ງ ແລະ ລະບຽບການຕ່າງໆ ຂອງຄະນະຮັບຜິດຊອບ ສະຖານທີ່ກັກຕົວ, ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ເພື່ອໃຫ້ສອດຄ່ອງກັບກົດໝາຍ ແລະ ໃຫ້ຄະນະຮັບຜິດຊອບດັ່ງກ່າວ ອະທິບາຍເຫດຜົນຂອງການລະເມີດກົດໝາຍ.

   ຄະນະຮັບຜິດຊອບ ສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ຕ້ອງປະຕິບັດຕາມຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນ ກ່ຽວກັບການເຄົາລົບລະບຽບການ ການກັກຕົວ, ການກັກຂັງ, ການດັດສ້າງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກົດໝາຍໄດ້ກຳນົດໄວ້.

### ມາດຕາ 54. ຄວາມຮັບຜິດຊອບໃນການສົ່ງ ຄຳຮ້ອງຟ້ອງ, ຄຳສະເໜີ ຂອງຜູ້ຖືກຫາ, ຈຳເລີຍ, ຜູ້ຖືກດັດສ້າງ ແລະ ນັກໂທດ

ຄະນະຮັບຜິດຊອບ ສະຖານທີ່ກັກຂັງ, ສູນດັດສ້າງ ແລະ ຄ້າຍດັດສ້າງ ຕ້ອງສົ່ງ ຄຳຮ້ອງຟ້ອງ, ຄຳສະເໜີຂອງຜູ້ຖືກຫາ, ຈຳເລີຍ, ຜູ້ຖືກດັດສ້າງ ແລະ ນັກໂທດ ໃຫ້ອົງການໄອຍະການປະຊາຊົນ ພາຍໃນ ສີ່ສິບແປດຊົ່ວໂມງ ນັບແຕ່ເວລາທີ່ໄດ້ຮັບເປັນຕົ້ນໄປ.

## ພາກທີ IV
## ລະບອບ ວິທີ ເຮັດວຽກ

### ມາດຕາ 55. ລະບອບເຮັດວຽກ

ອົງການໄອຍະການປະຊາຊົນທຸກຂັ້ນ ປະກອບເປັນ ລະບົບອົງການໄອຍະການປະຊາຊົນ ເອກະພາບ ແລະ ລວມສູນ, ນຳພາໂດຍ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນຂັ້ນລຸ່ມ ຂຶ້ນກັບຫົວໜ້າອົງການໄອຍະການປະຊາຊົນຂັ້ນເທິງ. ໃນເວລາປະຕິບັດໜ້າທີ່ຂອງຕົນນັ້ນ ຫົວໜ້າອົງການໄອຍະການປະຊາຊົນຂັ້ນລຸ່ມ ປະຕິບັດຕາມກົດໝາຍ ແລະ ຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ອົງການໄອຍະການປະຊາຊົນ ປະຕິບັດໜ້າທີ່ວຽກງານບົນພື້ນຖານ ຫລັກການນິຕິທຳ ໂດຍສອດຄ່ອງກັບກົດໝາຍ, ຮັບປະກັນການປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ.

ມາດຕາ 56(ໃໝ່). ວິທີເຮັດວຽກ

ອົງການໄອຍະການປະຊາຊົນ ປະຕິບັດໜ້າທີ່ວຽກງານ ໂດຍມີແຜນການ, ແບ່ງງານ ແລະ ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນ, ມີການກວດກາ, ສະຫລຸບ, ຖອດຖອນບົດຮຽນ ແລະ ລາຍງານ, ຂໍຄໍາເຫັນຊີ້ນໍາຈາກຂັ້ນເທິງຂອງຕົນ, ປະສານສົມທົບກັບ ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

## ພາກທີ V
## ຂໍ້ຫ້າມ

### ມາດຕາ 57 (ໃໝ່). ຂໍ້ຫ້າມ ສໍາລັບພະນັກງານປະຈໍາອົງການໄອຍະການປະຊາຊົນ

ຫ້າມ ພະນັກງານປະຈໍາອົງການໄອຍະການປະຊາຊົນ ມີ ການກະທໍາ ດັ່ງນີ້:

1. ສວຍໃຊ້ຕໍາແໜ່ງ, ໜ້າທີ່, ສິດອໍານາດ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ຫລື ຍາດພີ່ນ້ອງ;
2. ປະຕິບັດສິດ, ໜ້າທີ່ ເກີນຂອບເຂດ ຕາມທີ່ກົດໝາຍໄດ້ກໍານົດໄວ້;
3. ບັງຄັບ ແລະ ນາບຂູ່ ຜູ້ຖືກຫາ, ຈໍາເລີຍ, ນັກໂທດ ຫລື ຄູ່ຄວາມໃນຄະດີ ;
4. ເມີນເສີຍຕໍ່ໜ້າທີ່, ບິດເບືອນຄວາມຈິງ, ປິດບັງ ຫລື ປົກປ້ອງ ຜູ້ຖືກຫາ, ຈໍາເລີຍ, ນັກໂທດ ຫລື ຄູ່ຄວາມໃນຄະດີ;
5. ກັກສໍານວນຄະດີ, ກົດໜ່ວງເອກະສານ ເພື່ອຫາຜົນປະໂຫຍດຈາກການດໍາເນີນຄະດີ;
6. ທວງ, ຮຽກ, ຮັບ ເອົາສິນບົນ ຈາກຄູ່ຄວາມ, ບຸກຄົນ ແລະ ການຈັດຕັ້ງ;
7. ພົວພັນກັບ ຜູ້ຖືກຫາ, ຈໍາເລີຍ, ນັກໂທດ ຫລື ຄູ່ຄວາມໃນຄະດີ ເພື່ອຫາຜົນປະໂຫຍດ;
8. ປິດບັງ, ຊຸກເຊື່ອງ ເອກະສານ, ຫລັກຖານ ທີ່ມີຢູ່ໃນສໍານວນຄະດີ, ນໍາໃຊ້, ເຮັດໃຫ້ເປ່ເພ ເສັຍຫາຍ ຂອງກາງໃນຄະດີ;
9. ເປີດເຜີຍຄວາມລັບທາງລັດຖະການ;
10. ມີການກະທໍາອື່ນ ທີ່ຜິດຕໍ່ລະບຽບກົດໝາຍ.

### ມາດຕາ 58 (ໃໝ່). ຂໍ້ຫ້າມ ສໍາລັບຜູ້ເຂົ້າຮ່ວມໃນການດໍາເນີນຄະດີ

ຫ້າມ ຜູ້ເຂົ້າຮ່ວມໃນການດໍາເນີນຄະດີ ມີ ການກະທໍາ ດັ່ງນີ້:

1. ຂັດຂວາງ, ສ້າງຄວາມຫຍຸ້ງຍາກ, ນາບຂູ່ ພະນັກງານປະຈໍາອົງການໄອຍະການປະຊາຊົນ, ຜູ້ສະໜອງຂໍ້ມູນຫລັກຖານ ໃຫ້ແກ່ການດໍາເນີນຄະດີ ຫລື ບຸກຄົນອື່ນທີ່ກ່ຽວຂ້ອງ;
2. ລາຍງານ, ສະໜອງຂໍ້ມູນຫລັກຖານ ບໍ່ຖືກກັບຄວາມຈິງ, ຊຸກເຊື່ອງ, ທໍາລາຍເອກະສານ, ວັດຖຸສິ່ງຂອງ ທີ່ເປັນຫລັກຖານ ໃນຄະດີ;
3. ປະຕິເສດ ການສະໜອງຂໍ້ມູນຫລັກຖານ ກ່ຽວກັບຄະດີ;

4. ໃຫ້ສິນບົນ ພະນັກງານປະຈຳອົງການໄອຍະການປະຊາຊົນ, ພະຍານ ຫລື ບຸກຄົນອື່ນ ທີ່ກ່ຽວຂ້ອງ;
5. ຫມິ່ນປະຫມາດ, ໃສ່ຮ້າຍ ພະນັກງານປະຈຳອົງການໄອຍະການປະຊາຊົນ;
6. ມີການກະທຳອື່ນ ທີ່ຜິດຕໍ່ລະບຽບກົດຫມາຍ.

**ມາດຕາ 59 (ໃຫມ່). ຂໍ້ຫ້າມ ສຳລັບບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ ແລະ ການຈັດຕັ້ງອື່ນ ມີ ການກະທຳ ດັ່ງນີ້:

1. ແຊກແຊງ, ກ້າວກ່າຍ ແລະ ຂັດຂວາງ ການປະຕິບັດຫນ້າທີ່ ຂອງພະນັກງານປະຈຳອົງການໄອຍະການປະຊາຊົນ;
2. ປົກປິດ, ເຊື່ອງອຳ ຫລື ທຳລາຍ ຂໍ້ມູນ, ຫລັກຖານ ກ່ຽວກັບຄະດີ;
3. ນາບຂູ່ ຫລື ທຳຮ້າຍ ພະນັກງານປະຈຳອົງການໄອຍະການປະຊາຊົນ, ພະຍານ ຫລື ບຸກຄົນອື່ນ ທີ່ກ່ຽວຂ້ອງກັບຄະດີ;
4. ປົກປ້ອງ, ຊຸກເຊື່ອງ ຜູ້ຖືກຫາ, ຈຳເລີຍ, ນັກໂທດ ຫລື ຄູ່ຄວາມໃນຄະດີ;
5. ໃຫ້ສິນບົນ ພະນັກງານປະຈຳອົງການໄອຍະການປະຊາຊົນ;
6. ຫມິ່ນປະຫມາດ, ໃສ່ຮ້າຍ ພະນັກງານປະຈຳອົງການໄອຍະການປະຊາຊົນ;
7. ກັກຕົວ, ຈັບຕົວ, ກັກຂັງ, ກວດຄົ້ນເຄຫະສະຖານ ໂດຍບໍ່ມີຄຳສັ່ງ ຂອງອົງການໄອຍະການປະຊາຊົນ ຫລື ສານປະຊາຊົນ;
8. ນຳໃຊ້, ເຮັດໃຫ້ເປ່ເພ ເສັຍຫາຍ ຂອງກາງໃນຄະດີ;
9. ມີການກະທຳອື່ນ ທີ່ຜິດຕໍ່ລະບຽບກົດຫມາຍ.

## ພາກທີVI
## ການຕິດຕາມກວດກາອົງການໄອຍະການປະຊາຊົນ

**ມາດຕາ 60 (ໃຫມ່). ປະເພດການຕິດຕາມກວດກາ**

ການຕິດຕາມກວດກາອົງການໄອຍະການປະຊາຊົນ ມີ ສອງປະເພດ ດັ່ງນີ້:

1. ການຕິດຕາມກວດກາພາຍໃນ ຊຶ່ງແມ່ນ ອົງການໄອຍະການປະຊາຊົນຂັ້ນເທິງ ກວດກາ ອົງການໄອຍະການປະຊາຊົນຂັ້ນລຸ່ມ ຕາມກົດຫມາຍສະບັບນີ້;
2. ການຕິດຕາມກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ ກວດກາຕາມກົດຫມາຍວ່າດ້ວຍ ການຕິດຕາມກວດກາຂອງສະພາແຫ່ງຊາດ.

**ມາດຕາ 61(ໃໝ່). ເນື້ອໃນການຕິດຕາມກວດກາ**

ການຕິດຕາມກວດກາອົງການໄອຍະການປະຊາຊົນ ມີ ເນື້ອໃນ ດັ່ງນີ້:

1. ກວດກາການປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ;
2. ກວດກາການປະຕິບັດກົດໝາຍ ຂອງອົງການໄອຍະການປະຊາຊົນ ເປັນຕົ້ນ ການນຳໃຊ້ມາດຕະການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ;
3. ກວດກາການອຳນວຍຄວບຄຸມ, ການຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ບຸກຄະລາກອນ;
4. ກວດກາການປະຕິບັດ ນະໂຍບາຍ ແລະ ມາດຕະການ ຕໍ່ພະນັກງານປະຈຳອົງການໄອຍະການປະຊາຊົນ.

**ມາດຕາ 62 (ໃໝ່). ຮູບການການຕິດຕາມກວດກາ**

ການຕິດຕາມກວດກາອົງການໄອຍະການປະຊາຊົນ ດຳເນີນຕາມແຜນການປົກກະຕິ, ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແລະ ແບບກະທັນຫັນ.

## ພາກທີ VII
## ວັນສ້າງຕັ້ງ, ງົບປະມານ, ເຄື່ອງໝາຍ, ເຄື່ອງແບບ, ກາໝາຍ, ບັດປະຈຳການ ແລະ ຕາປະທັບ

**ມາດຕາ 63 (ໃໝ່). ວັນສ້າງຕັ້ງອົງການໄອຍະການປະຊາຊົນ**

ວັນສ້າງຕັ້ງອົງການໄອຍະການປະຊາຊົນ ແມ່ນ ວັນທີ 9 ມັງກອນ1990.

**ມາດຕາ 64. ງົບປະມານຂອງອົງການໄອຍະການປະຊາຊົນ**

ງົບປະມານຂອງອົງການໄອຍະການປະຊາຊົນ ໃຫ້ຂຶ້ນຕາມສາຍຕັ້ງ ໂດຍແມ່ນ ອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ສັງລວມແຜນການງົບປະມານ ຈາກອົງການໄອຍະການປະຊາຊົນຂັ້ນລຸ່ມຂອງຕົນ ແລ້ວສ້າງເປັນແຜນການງົບປະມານລວມ ແລະ ນຳສະເໜີຂໍການອະນຸມັດ ຕາມລະບຽບກົດໝາຍ.

ງົບປະມານຂອງອົງການໄອຍະການທະຫານ ໃຫ້ຂຶ້ນກັບ ກະຊວງປ້ອງກັນປະເທດ.

ຫົວໜ້າ, ຮອງຫົວໜ້າອົງການໄອຍະການປະຊາຊົນ, ພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ ມີດັດສະນີ ຂັ້ນ ເງິນເດືອນ ສະເພາະ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 65. ເຄື່ອງໝາຍ, ເຄື່ອງແບບ, ກາໝາຍ ແລະ ບັດປະຈຳການ ຂອງ ອົງການໄອຍະການປະຊາຊົນ**

ເຄື່ອງໝາຍ, ເຄື່ອງແບບ ແລະ ກາໝາຍ ຂອງອົງການໄອຍະການປະຊາຊົນ ແມ່ນ ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງ ຕາມການສະເໜີ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ບັດປະຈຳການ ຂອງຫົວໜ້າ, ຮອງຫົວໜ້າອົງການໄອຍະການ ແລະ ພະນັກງານໄອຍະການປະຊາຊົນ ແມ່ນ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ອອກໃຫ້.

**ມາດຕາ 66. ຕາປະທັບ ຂອງ ອົງການໄອຍະການປະຊາຊົນ**

ອົງການໄອຍະການປະຊາຊົນແຕ່ລະຂັ້ນ ມີ ຕາປະທັບຂອງຕົນ ຊຶ່ງເປັນຮູບວົງມົນ, ຢູ່ກາງວົງມົນ ມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງ ຂຽນວ່າ: " ອົງການໄອຍະການປະຊາຊົນສູງສຸດ" ເບື້ອງລຸ່ມຂຽນຊື່ຂອງອົງການໄອຍະການປະຊາຊົນ ຂັ້ນຂອງຕົນ ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

ສຳລັບຕາປະທັບ ຂອງອົງການໄອຍະການປະຊາຊົນສູງສຸດນັ້ນ ເນື້ອໃນຢູ່ໃນຂອບວົງມົນ ເບື້ອງເທິງຂຽນວ່າ: "ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ" ເບື້ອງລຸ່ມຂຽນວ່າ:" ອົງການໄອຍະການປະຊາຊົນສູງສຸດ" ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ພາກທີ VIII

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 67 (ໃໝ່). ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ຫລື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນ ກ່ຽວກັບການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບ ການປົກປ້ອງ, ການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 68 (ໃໝ່). ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫລື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງສ້າງຄວາມເສັຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫລື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ ຫລື ດຳເນີນຄະດີ ຕາມລະບຽບກົດໝາຍ ຕາມກໍລະນີເບົາ ຫລື ໜັກ ພ້ອມທັງໃຊ້ແທນຄ່າເສັຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

# ພາກທີ IX
# ບົດບັນຍັດສຸດທ້າຍ

**ມາດຕາ 69.  ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 70.  ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍ ວ່າດ້ວຍອົງການໄອຍະການປະຊາຊົນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 06/ສພຊ ລົງວັນທີ 21 ຕຸລາ 2003.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ທອງສິງ ທຳມະວົງ